ສາລະບານ


ກົດໝາຍ ວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາ ........ 3
ໝວດທີ I ບົດບັນຍັດທົ່ວໄປ ........ 3
ມາດຕາ 1. ຈຸດປະສົງຂອງກົດໝາຍວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາ ........ 3
ມາດຕາ 2. ການຄໍ້າປະກັນ ........ 3
ມາດຕາ 3. ປະເພດການຄໍ້າປະກັນ ........ 3
ມາດຕາ 4. ການຄໍ້າປະກັນຕາມກົດໝາຍ ........ 3
ມາດຕາ 5. ການຄໍ້າປະກັນຕາມສັນຍາ ........ 4
ມາດຕາ 6. ຮູບການ, ເນື້ອໃນ ແລະເງື່ອນໄຂຂອງສັນຍາຄໍ້າປະກັນ ........ 4
ມາດຕາ 7. ລໍາດັບບຸລິມະສິດຂອງການຄໍ້າປະກັນ ........ 4
ມາດຕາ 8. ຮູບແບບການຄໍ້າປະກັນຕາມສັນຍາ ........ 4
ມາດຕາ 9. ສິດໃນການຄໍ້າປະກັນໂດຍວິສາຫະກິດຂອງລັດ ........ 5
ໝວດທີ II ການຄໍ້າປະກັນດ້ວຍສັງຫາລິມະຊັບ ........ 5
ມາດຕາ 10. ການຄໍ້າປະກັນດ້ວຍສັງຫາລິມະຊັບ ........ 5
ມາດຕາ 11. ປະເພດການຊວດຈໍາ ........ 5
ມາດຕາ 12. ການຊວດຈໍາດ້ວຍວັດຖຸສິ່ງຂອງ ........ 6
ມາດຕາ 13. ເງື່ອນໄຂຂອງການຊວດຈໍາດ້ວຍວັດຖຸສິ່ງຂອງ ........ 6
ມາດຕາ 14. ຜົນຂອງການຊວດຈໍາດ້ວຍວັດຖຸສິ່ງຂອງ ........ 6
ມາດຕາ 15. ການຊວດຈໍາດ້ວຍເອກະສານ ........ 7
ມາດຕາ 16. ສິດຂອງເຈົ້າໜີ້ໃນການຊວດຈໍາດ້ວຍເອກະສານ ........ 7
ມາດຕາ 17. ການຊວດຈໍາດ້ວຍສິນຄ້າໃນສາງ ........ 7
ມາດຕາ 18. ການກໍານົດລັກສະນະ ແລະ ການຕີມູນຄ່າຂອງສັງຫາລິມະຊັບ ........ 7
ມາດຕາ 19. ການຊວດຈໍາດ້ວຍຊັບສິນທີ່ບໍ່ມີຕົວຕົນ ........ 7
ໝວດທີ III ການຄໍ້າປະກັນດ້ວຍອະສັງຫາລິມະຊັບ ........ 8
ມາດຕາ 20. ການຄໍ້າປະກັນດ້ວຍອະສັງຫາລິມະຊັບ ........ 8
ມາດຕາ 21. ຮູບການຂອງສັນຍາຄໍ້າປະກັນດ້ວຍອະສັງຫາລິມະຊັບ ........ 8
ມາດຕາ 22. ການກໍານົດມູນຄ່າ ແລະ ລັກສະນະຂອງອະສັງຫາລິມະຊັບ ........ 8
ມາດຕາ 23. ການສ້ອມແປງ, ປັບປຸງ ຫລື ເພີ່ມເຕີມ ........ 8
ມາດຕາ 24. ການນໍາໃຊ້ອະສັງຫາລິມະຊັບ ........ 8
ມາດຕາ 25. ສິດຂອງເຈົ້າໜີ້ ........ 9
ໝວດທີ IV ການຄໍ້າປະກັນດ້ວຍບຸກຄົນ ຫລື ນິຕິບຸກຄົນອື່ນ ........ 9
ມາດຕາ 26. ການຄໍ້າປະກັນດ້ວຍບຸກຄົນ ຫລື ນິຕິບຸກຄົນອື່ນ ........ 9
ມາດຕາ 27. ຂອບເຂດຄວາມຮັບຜິດຊອບຂອງຜູ້ຄໍ້າປະກັນ ........ 9
ມາດຕາ 28. ຜູ້ຄໍ້າປະກັນຮ່ວມ ........ 10

ມາດຕາ 29. ຜູ້ຄໍ້າປະກັນເສັຍຊີວິດ ຫລື ເສັຍຈິດ ........ 10
ມາດຕາ 30. ການພົ້ນຈາກການຄໍ້າປະກັນ ........ 10
ໝວດທີ V ລະບຽບການລວມຂອງການຄໍ້າປະກັນ ........ 11
ມາດຕາ 31. ການຈົດທະບຽນການຄໍ້າປະກັນ ........ 11
ມາດຕາ 32. ການສະລະບຸລິມະສິດ ແລະ ການໂອນການຄໍ້າປະກັນ ........ 11
ມາດຕາ 33. ສິດ ແລະ ພັນທະຂອງຜູ້ປົກຄອງ ........ 11
ມາດຕາ 34. ສິດໃນການຂາຍຊັບທີ່ນຳມາຄໍ້າປະກັນ ........ 12
ມາດຕາ 35. ການປ່ຽນແປງ ຫລື ການຍົກເລີກສັນຍາຄໍ້າປະກັນ ........ 12
ມາດຕາ 36. ການຄໍ້າປະກັນທີ່ເປັນໂມຄະ ........ 12
ມາດຕາ 37. ການສິ້ນສຸດການຄໍ້າປະກັນ ........ 12
ມາດຕາ 38. ການລົບລ້າງການຈົດທະບຽນສັນຍາຄໍ້າປະກັນ ........ 13
ໝວດທີ VI ບົດບັນຍັດສຸດທ້າຍ ........ 13
ມາດຕາ 39. ການຈັດຕັ້ງປະຕິບັດ ........ 13
ມາດຕາ 40. ຜົນສັກສິດ ........ 13

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ ເລກທີ 06 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 ພຶດສະພາ 2005

# ກົດໝາຍ ວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ

## ໝວດທີ I ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງຂອງກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ

ກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ເພື່ອຮັບປະກັນການປະຕິບັດສັນຍາ, ເສີມຂະຫຍາຍສາຍພົວພັນທາງດ້ານຊັບສິນ ໃນການດຳລົງຊີວິດຂອງປະຊາຊົນ, ຊຸກຍູ້ການຜະລິດ ແລະ ການດຳເນີນທຸລະກິດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຍຸຕິທຳ.

### ມາດຕາ 2. ການຄ້ຳປະກັນ

ການຄ້ຳປະກັນ ແມ່ນການຮັບປະກັນການປະຕິບັດພັນທະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫລື ສັນຍາ.

### ມາດຕາ 3. ປະເພດການຄ້ຳປະກັນ

ການຄ້ຳປະກັນມີ ສອງ ປະເພດຄື:

- ການຄ້ຳປະກັນຕາມກົດໝາຍ;
- ການຄ້ຳປະກັນຕາມສັນຍາ.

### ມາດຕາ 4. ການຄ້ຳປະກັນຕາມກົດໝາຍ

ການຄ້ຳປະກັນຕາມກົດໝາຍ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫລື ພັນທະອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ ໂດຍອີງໃສ່ເຫດຜົນທາງດ້ານມະນຸດສະທຳ ແລະ ທາງດ້ານຜົນປະໂຫຍດລວມຂອງຊາດເຊັ່ນ: ການຈ່າຍຄ່າແຮງງານ, ເງິນເດືອນ ຫລື ຜົນປະໂຫຍດອື່ນໆ ຕາມທີ່ໄດ້ ກຳນົດໄວ້ໃນກົດໝາຍແຮງງານ, ການເສຍພາສີ-ອາກອນ

ແລະ ການຈ່າຍອື່ນໆເພື່ອຮັບປະກັນ ຜົນປະໂຫຍດຂອງຊາດຊຶ່ງບໍ່ກວມເອົາໜີ້ສິນ ຫລື ຜົນປະໂຫຍດອື່ນໆ ທີ່ເກີດຈາກສັນຍາລະຫວ່າງ ລັດກັບບຸກຄົນ ຫລື ການຈັດຕັ້ງອື່ນໆ.

## ມາດຕາ 5. ການຄ້ຳປະກັນຕາມສັນຍາ

ການຄ້ຳປະກັນຕາມສັນຍາ ແມ່ນການຕົກລົງຮັບປະກັນການໃຊ້ແທນໜີ້ສິນລະຫວ່າງເຈົ້າໜີ້ກັບລູກໜີ້ ຫລື ການຕົກລົງໃຊ້ໜີ້ສິນແທນລູກໜີ້ ໂດຍບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງ ໃນກໍ ລະນີທີ່ລູກໜີ້ຫາກບໍ່ປະຕິບັດສັນຍາ.

ການຄ້ຳປະກັນຕາມສັນຍາມີສອງຢ່າງຄື:

- ການຄ້ຳປະກັນຕາມສັນຍາດ້ວຍຊັບ;
- ການຄ້ຳປະກັນຕາມສັນຍາດ້ວຍບຸກຄົນ ຫລື ນິຕິບຸກຄົນ.

ການຄ້ຳປະກັນຕາມສັນຍາດ້ວຍຊັບ ແມ່ນການຕົກລົງລະຫວ່າງເຈົ້າໜີ້ກັບລູກໜີ້ ຊຶ່ງລູກໜີ້ໄດ້ເອົາຊັບ ຫລື ເອກະສານຢັ້ງຢືນຊັບໄປໄວ້ໃນການຄອບຄອງຂອງເຈົ້າໜີ້ ຫລື ໄວ້ນຳບຸກຄົນອື່ນທີ່ໄດ້ຮັບມອບໝາຍ ຫລື ຊັບດັ່ງກ່າວໄດ້ມີການກຳນົດໄວ້ຢ່າງຈະແຈ້ງ ຢູ່ໃນສັນຍາຄ້ຳປະກັນ; ເຈົ້າໜີ້ດັ່ງກ່າວ ມີບຸລິມະສິດໃນການໄດ້ຮັບການໃຊ້ແທນໜີ້ສິນດ້ວຍຊັບນັ້ນ.

ການຄ້ຳປະກັນຕາມສັນຍາດ້ວຍບຸກຄົນ ຫລື ນິຕິບຸກຄົນ ແມ່ນສັນຍາຊຶ່ງບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງໄດ້ຕົກລົງໃຊ້ແທນໜີ້ສິນ ຫລື ປະຕິບັດພັນທະອື່ນຕາງລູກໜີ້ ໃນກໍລະນີທີ່ລູກໜີ້ຫາກບໍ່ໃຊ້ແທນໜີ້ສິນ ຫລື ບໍ່ປະຕິບັດພັນທະອື່ນດ້ວຍຕົນເອງ.

## ມາດຕາ 6. ຮູບການ, ເນື້ອໃນ ແລະເງື່ອນໄຂຂອງສັນຍາຄ້ຳປະກັນ

ການເຮັດສັນຍາຄ້ຳປະກັນ ໃຫ້ອີງໃສ່ຮູບການ, ເນື້ອໃນ ແລະ ເງື່ອນໄຂຂອງສັນຍາທົ່ວໄປ ຊຶ່ງໄດ້ບົ່ງໄວ້ໃນກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ. ສັນຍາຄ້ຳປະກັນອາດຈະເຮັດພ້ອມກັນກັບສັນຍາກູ້ຢືມ ຫລື ເຮັດລຸນຫລັງກໍໄດ້. ສັນຍາຄ້ຳປະກັນອາດຈະເຮັດໃສ່ເອກະສານດຽວກັນກັບສັນຍາ ກູ້ຢືມ ຫລື ເຮັດເປັນສັນຍາໜຶ່ງຕ່າງຫາກກໍໄດ້.

## ມາດຕາ 7. ລຳດັບບຸລິມະສິດຂອງການຄ້ຳປະກັນ

ການໃຊ້ແທນໜີ້ສິນດ້ວຍການຄ້ຳປະກັນ ໃຫ້ປະຕິບັດຕາມລຳດັບບຸລິມະສິດດັ່ງນີ້ :

- ການຄ້ຳປະກັນຕາມກົດໝາຍ;
- ການຄ້ຳປະກັນຕາມສັນຍາ.

ບຸລິມະສິດທີ່ກ່າວມາເທິງນີ້ ຈະຖືກນຳໃຊ້ກໍຕໍ່ເມື່ອລູກໜີ້ຫາກບໍ່ໃຊ້ແທນໜີ້ສິນ, ບໍ່ປະຕິບັດພັນທະຂອງຕົນ ຫລື ຖືກສານຕັດສິນໃຫ້ລົ້ມລະລາຍ.

## ມາດຕາ 8. ຮູບແບບການຄ້ຳປະກັນຕາມສັນຍາ

ການຄ້ຳປະກັນຕາມສັນຍາມີ ສາມ ຮູບແບບດັ່ງນີ້ :

- ການຄ້ຳປະກັນດ້ວຍສັງຫາລິມະຊັບ;
- ການຄ້ຳປະກັນດ້ວຍອະສັງຫາລິມະຊັບ;
- ການຄ້ຳປະກັນດ້ວຍບຸກຄົນ ຫລື ນິຕິບຸກຄົນອື່ນ.

### ມາດຕາ 9. ສິດໃນການຄ້ຳປະກັນໂດຍວິສາຫະກິດຂອງລັດ

ລັດວິສາຫະກິດ ຫລື ລັດວິສາຫະກິດປະສົມ ທີ່ໄດ້ຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍ ສາມາດເອົາຊັບສິນຂອງຕົນ ໄປເປັນຫຼັກຊັບຄ້ຳປະກັນໄດ້ຕາມລະບຽບກົດໝາຍ.

ສຳລັບທີ່ດິນນັ້ນ ລັດວິສາຫະກິດ ຫລື ລັດວິສາຫະກິດປະສົມ, ໂດຍໄດ້ຮັບຄວາມເຫັນດີຈາກ ສະພາບໍລິຫານ, ສາມາດນຳໄປຄ້ຳປະກັນໄດ້ ແຕ່ສິດໃຊ້ໃນຂອບເຂດກຳນົດເວລາ ຕາມການອະນຸ ຍາດຂອງລັດຖະບານ.

ລັດຖະບານເປັນຜູ້ອອກລະບຽບການລະອຽດ ກ່ຽວກັບການເອົາຊັບສິນຂອງລັດວິສາຫະກິດ ຫລື ລັດວິສາຫະກິດປະສົມ ໄປເປັນຫລັກຊັບຄ້ຳປະກັນ.

## ໝວດທີ II ການຄ້ຳປະກັນດ້ວຍສັງຫາລິມະຊັບ

### ມາດຕາ 10. ການຄ້ຳປະກັນດ້ວຍສັງຫາລິມະຊັບ

ການຄ້ຳປະກັນດ້ວຍສັງຫາລິມະຊັບ ຊຶ່ງເອີ້ນວ່າການຊວດຈຳ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫລື ການປະຕິບັດພັນທະອື່ນດ້ວຍຊັບທີ່ສາມາດເຄື່ອນຍ້າຍໄດ້.

### ມາດຕາ 11. ປະເພດການຊວດຈຳ

ການຊວດຈຳມີ ຫ້າ ປະເພດຕົ້ນຕໍດັ່ງນີ້:

- ການຊວດຈຳດ້ວຍວັດຖຸສິ່ງຂອງ;
- ການຊວດຈຳດ້ວຍເອກະສານເຊັ່ນ: ເອກະສານຢັ້ງຢືນກຳມະສິດ, ໃບຮຸ້ນ, ໃບຮຸ້ນກູ້, ພັນທະບັດ;
- ການຊວດຈຳດ້ວຍສິນຄ້າໃນສາງ;
- ການຊວດຈຳດ້ວຍຊັບສິນທີ່ບໍ່ມີຕົວຕົນເຊັ່ນ: ຮຸ້ນໃນບໍລິສັດ, ຊັບສິນທາງປັນຍາ, ເງິນຝາກທະນາຄານ, ສິດຕາມສັນຍາ, ສິດໃນການຮັບຊັບສິນ ຫລື ວັດຖຸສິ່ງຂອງ, ການ ອະນຸຍາດ, ການຮັບຮອງ ຫລື ສິດໃນການດຳເນີນທຸລະກິດໃດໜຶ່ງ;
- ການຊວດຈຳດ້ວຍຊັບສິນ ຫລື ໝາກຜົນຂອງໂຄງການ ຫລື ກິດຈະການໃດໜຶ່ງ ທີ່ ຮັບປະກັນວ່າຈະເກີດຂຶ້ນຢ່າງແນ່ນອນໃນອະນາຄົດ.

## ມາດຕາ 12. ການຊວດຈຳດ້ວຍວັດຖຸສິ່ງຂອງ

ການຊວດຈຳດ້ວຍວັດຖຸສິ່ງຂອງ ແມ່ນສັນຍາຊຶ່ງລູກໜີ້ໄດ້ເອົາວັດຖຸສິ່ງຂອງຂອງຕົນໄວ້ໃນ ການຄອບຄອງຂອງເຈົ້າໜີ້ ຫລື ໄວ້ນຳຄົນອື່ນທີ່ໄດ້ຮັບມອບໝາຍ ຫລື ໃນເມື່ອລູກໜີ້ໄດ້ກຳນົດ ວັດຖຸສິ່ງຂອງດັ່ງກ່າວຢ່າງຈະແຈ້ງໃນສັນຍາຊວດຈຳ ເພື່ອຮັບປະກັນການໃຊ້ແທນໜີ້ສິນ ຫລື ພັນທະອື່ນ ແຕ່ລູກໜີ້ຍັງເປັນຜູ້ຄອບຄອງວັດຖຸສິ່ງຂອງດັ່ງກ່າວຢູ່.

## ມາດຕາ 13. ເງື່ອນໄຂຂອງການຊວດຈຳດ້ວຍວັດຖຸສິ່ງຂອງ

**ການຊວດຈຳດ້ວຍວັດຖຸສິ່ງຂອງ ປະກອບດ້ວຍ ເງື່ອນໄຂດັ່ງຕໍ່ໄປນີ້:**

1. **ມີສັນຍາໃຊ້ໜີ້ ຊຶ່ງເປັນສັນຍາຊວດຈຳທີ່ຮັບປະກັນດ້ວຍວັດຖຸສິ່ງຂອງ;**
2. **ວັດຖຸສິ່ງຂອງນັ້ນ ຕ້ອງເປັນກຳມະສິດຂອງລູກໜີ້ ຫລື ຂອງບຸກຄົນອື່ນທີ່ໄດ້ມອບສິດ ຢ່າງເປັນລາຍລັກອັກສອນໃຫ້ນຳມາຊວດຈຳ;**
3. **ວັດຖຸສິ່ງຂອງນັ້ນ ຕ້ອງນຳໄປໄວ້ໃນການຄອບຄອງຂອງເຈົ້າໜີ້ ຫລື ບຸກຄົນອື່ນ ທີ່ທັງສອງຝ່າຍເຫັນດີເຫັນພ້ອມນຳກັນ.**

## ມາດຕາ 14. ຜົນຂອງການຊວດຈຳດ້ວຍວັດຖຸສິ່ງຂອງ

ວັດຖຸສິ່ງຂອງທີ່ນຳໄປຊວດຈຳນັ້ນ ຍັງເປັນກຳມະສິດຂອງລູກໜີ້ຢູ່ ແຕ່ຢູ່ໃນການຄອບຄອງ ຂອງເຈົ້າໜີ້ ຫລື ຂອງບຸກຄົນອື່ນ ທີ່ໄດ້ຮັບມອບໝາຍໃຫ້ປົກປັກຮັກສາວັດຖຸສິ່ງຂອງນັ້ນ. ເຈົ້າໜີ້ອື່ນໆ ບໍ່ມີສິດຍຶດເອົາວັດຖຸສິ່ງຂອງທີ່ນຳມາຊວດຈຳນັ້ນ. ເຈົ້າໜີ້ທີ່ມີການຄ້ຳປະກັນ ຫລື ຜູ້ໄດ້ຮັບມອບໝາຍໃຫ້ປົກປັກຮັກສາວັດຖຸສິ່ງຂອງນັ້ນ ບໍ່ມີສິດນຳໃຊ້ ຫລື ຮັບໝາກຜົນຈາກວັດຖຸສິ່ງຂອງດັ່ງກ່າວ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຢ່າງເປັນລາຍລັກອັກສອນຈາກລູກໜີ້. ເຈົ້າໜີ້ ຫລື ຜູ້ໄດ້ຮັບມອບໝາຍໃຫ້ປົກປັກຮັກສາວັດຖຸສິ່ງຂອງນັ້ນ ຕ້ອງຮັບຜິດຊອບໃຊ້ແທນ ຖ້າວັດຖຸສິ່ງຂອງນັ້ນຫາກ ມີການເປ່ເພເສັຍຫາຍຍ້ອນຄວາມຜິດພາດຂອງຕົນ. ໃນກໍລະນີທີ່ວັດຖຸສິ່ງຂອງ ຊຶ່ງນຳມາຊວດຈຳ ນັ້ນຫາກຕົກເຮ່ຍເສັຍຫາຍ ຫລື ຖືກລັກ ເຈົ້າໜີ້ ຫລື ຜູ້ໄດ້ຮັບມອບໝາຍໃຫ້ປົກປັກຮັກສາມີສິດທວງ, ຕິດຕາມເອົາວັດຖຸສິ່ງຂອງນັ້ນຄືນ.

ເມື່ອລູກໜີ້ ຫາກໄດ້ໃຊ້ແທນໜີ້ສິນໝົດແລ້ວ ສັນຍາຊວດຈຳກໍຈະສິ້ນສຸດລົງ. ວັດຖຸສິ່ງ ຂອງທີ່ນຳມາຊວດຈຳນັ້ນ ຕ້ອງສົ່ງຄືນໃຫ້ລູກໜີ້. ຖ້າວ່າລູກໜີ້ ຫາກບໍ່ໃຊ້ແທນໜີ້ສິນຕາມກຳນົດເວລາທີ່ໄດ້ຕົກລົງກັນ ວັດຖຸສິ່ງຂອງທີ່ນຳມາຊວດຈຳນັ້ນ ກໍຈະຕົກເປັນກຳມະສິດຂອງເຈົ້າໜີ້. ໃນກໍລະນີທີ່ວັດຖຸສິ່ງຂອງທີ່ນຳມາຊວດຈຳນັ້ນ ຫາກມີລາຄາສູງກວ່າໜີ້ສິນ, ເຈົ້າໜີ້ສາມາດເສັ້ງເອົາ, ຂາຍວັດຖຸສິ່ງຂອງທີ່ນຳມາຊວດຈຳນັ້ນຕາມທີ່ໄດ້ຕົກລົງກັນ ຫລື ປະມູນຂາຍ. ພາຍຫລັງທີ່ໄດ້ຫັກເອົາຕົ້ນທຶນ ແລະ ດອກເບັ້ຍແລ້ວ ສ່ວນທີ່ເຫລືອຕ້ອງສົ່ງຄືນໃຫ້ລູກໜີ້. ຖ້າວ່າຈຳນວນເງິນທີ່ໄດ້ຈາກການຂາຍວັດຖຸສິ່ງ

ຂອງທີ່ນຳມາຊວດຈຳນັ້ນ ຫາກບໍ່ພຽງພໍກັບຫນີ້ສິນ ແມ່ນໃຫ້ລູກຫນີ້ຕື່ມໃສ່ຈົນໃຫ້ຄົບຖ້ວນ.

### ມາດຕາ 15. ການຊວດຈຳດ້ວຍເອກະສານ

ການຊວດຈຳດ້ວຍເອກະສານ ແມ່ນສັນຍາ ຊຶ່ງລູກຫນີ້ໄດ້ມອບເອກະສານຢັ້ງຢືນກຳມະສິດ ສັງຫາລິມະຊັບໃຫ້ແກ່ເຈົ້າຫນີ້ ເພື່ອຮັບປະກັນການໃຊ້ແທນຫນີ້ສິນ, ແຕ່ລູກຫນີ້ຍັງມີສິດຄອບຄອງ ແລະ ນຳໃຊ້ຊັບດັ່ງກ່າວຕໍ່ໄປ.

ໃນການຊວດຈຳດ້ວຍເອກະສານ ລູກຫນີ້ຍັງເປັນເຈົ້າກຳມະສິດໃນຊັບ ແລະ ມີສິດນຳໃຊ້ຊັບດັ່ງກ່າວແຕ່ບໍ່ມີສິດຂາຍ, ໂອນ ຫລື ນຳໄປຊວດຈຳຕໍ່. ນອກຈາກນີ້ ລູກຫນີ້ຕ້ອງປົກປັກຮັກສາວັດ ຖຸສິ່ງຂອງດັ່ງກ່າວໃຫ້ຢູ່ໃນສະພາບເດີມ.

### ມາດຕາ 16. ສິດຂອງເຈົ້າຫນີ້ໃນການຊວດຈຳດ້ວຍເອກະສານ

ໃນການຊວດຈຳດ້ວຍເອກະສານນັ້ນ ເຈົ້າຫນີ້ມີສິດ:

- ທວງທາວ, ຕິດຕາມເອົາສັງຫາລິມະຊັບທີ່ໄດ້ນຳມາຊວດຈຳນັ້ນ ໃນກໍລະນີທີ່ຊັບດັ່ງ ກ່າວ ຫາກຢູ່ນຳບຸກຄົນອື່ນ;
- ໄດ້ຮັບການໃຊ້ແທນຫນີ້ສິນ ດ້ວຍມູນຄ່າຂອງສັງຫາລິມະຊັບ ທີ່ນຳມາຊວດຈຳກ່ອນ ເຈົ້າຫນີ້ຜູ້ອື່ນ;
- ສະເຫນີໃຫ້ທຳການປະມູນຂາຍສັງຫາລິມະຊັບນັ້ນ.

### ມາດຕາ 17. ການຊວດຈຳດ້ວຍສິນຄ້າໃນສາງ

ການຊວດຈຳດ້ວຍສິນຄ້າໃນສາງ ແມ່ນການນຳເອົາໃບຢັ້ງຢືນສິນຄ້າໃນສາງ ໄປຄ້ຳປະກັນການໃຊ້ແທນຫນີ້ສິນນຳເຈົ້າຫນີ້. ໃບຢັ້ງຢືນສິນຄ້າໃນສາງສາມາດປ່ຽນມືໄດ້. ສ່ວນລະບຽບການລະອຽດກ່ຽວກັບໃບຢັ້ງຢືນສິນຄ້າໃນສາງນັ້ນ ແມ່ນລັດຖະບານເປັນຜູ້ກຳນົດ.

### ມາດຕາ 18. ການກຳນົດລັກສະນະ ແລະ ການຕີມູນຄ່າຂອງສັງຫາລິມະຊັບ

ສັງຫາລິມະຊັບຊຶ່ງນຳໄປຊວດຈຳນັ້ນ ຕ້ອງໄດ້ກຳນົດລັກສະນະ ແລະ ມູນຄ່າຢ່າງຄົບຖ້ວນໄວ້ ໃນສັນຍາ ຕາມການເຫັນດີເຫັນພ້ອມຂອງຄູ່ສັນຍາທັງສອງຝ່າຍ.

### ມາດຕາ 19. ການຊວດຈຳດ້ວຍຊັບສິນທີ່ບໍ່ມີຕົວຕົນ

ຊັບສິນທີ່ບໍ່ມີຕົວຕົນ ແລະ ຊັບສິນ ຫລື ຫມາກຜົນຂອງໂຄງການ ຫລື ກິດຈະການໃດຫນຶ່ງທີ່ຮັບປະກັນວ່າຈະເກີດຂຶ້ນຢ່າງແນ່ນອນໃນອະນາຄົດ ສາມາດນຳໄປຊວດຈຳໄດ້. ສິດຕໍ່ຊັບສິນ ຫລື ຫມາກຜົນດັ່ງກ່າວ ກໍສາມາດຂາຍ, ແລກປ່ຽນ ຫລື ມອບໃຫ້ເປັນກຳມະສິດແກ່ບຸກຄົນອື່ນໄດ້.

## ໝວດທີ III ການຄ້ຳປະກັນດ້ວຍອະສັງຫາລິມະຊັບ

### ມາດຕາ 20. ການຄ້ຳປະກັນດ້ວຍອະສັງຫາລິມະຊັບ

ການຄ້ຳປະກັນດ້ວຍອະສັງຫາລິມະຊັບ ແມ່ນການຮັບປະກັນການໃຊ້ແທນໜີ້ສິນ ຫລື ພັນທະອື່ນແກ່ເຈົ້າໜີ້ ດ້ວຍອະສັງຫາລິມະຊັບ ຫລື ດ້ວຍສິດນຳໃຊ້ອະສັງຫາລິມະຊັບຂອງລູກໜີ້ເຊັ່ນ: ທີ່ດິນ, ເຮືອນ, ໂຮງຈັກໂຮງງານ ໂດຍເອົາໃບຢັ້ງຢືນກຳມະສິດ ຫລື ເອກະສານຢັ້ງຢືນສິດນຳໃຊ້ຊັບດັ່ງກ່າວໄປໄວ້ໃນການຄອບຄອງຂອງເຈົ້າໜີ້ ຫລື ໄວ້ນຳບຸກຄົນອື່ນທີ່ໄດ້ຮັບມອບໝາຍ. ສຳລັບການຄ້ຳປະກັນດ້ວຍສິດໃຊ້ອະສັງຫາລິມະຊັບນັ້ນ ຕ້ອງໄດ້ຮັບຄຳເຫັນດີຈາກເຈົ້າຂອງຊັບເສັຍກ່ອນ.

### ມາດຕາ 21. ຮູບການຂອງສັນຍາຄ້ຳປະກັນດ້ວຍອະສັງຫາລິມະຊັບ

ສັນຍາຄ້ຳປະກັນດ້ວຍອະສັງຫາລິມະຊັບ ຕ້ອງເຮັດເປັນລາຍລັກອັກສອນດ້ວຍຮູບການ ໃດໜຶ່ງໃນສອງຮູບການດັ່ງລຸ່ມນີ້:

- ເຮັດຂຶ້ນໂດຍຄູ່ສັນຍາ ຊ້ອງໜ້າພະນັກງານທະບຽນສານ ຫລື ນາຍບ້ານ ພ້ອມດ້ວຍພະຍານສາມຄົນ;
- ເຮັດຂຶ້ນໂດຍຄູ່ສັນຍາຊ້ອງໜ້າພະຍານສາມຄົນ.

ສັນຍາຄ້ຳປະກັນດ້ວຍອະສັງຫາລິມະຊັບທີ່ຕັ້ງຢູ່ໃນ ສປປ ລາວ ສາມາດເຮັດຢູ່ຕ່າງປະເທດໄດ້ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ.

ສັນຍາຄ້ຳປະກັນດ້ວຍອະສັງຫາລິມະຊັບທີ່ຕັ້ງຢູ່ຕ່າງປະເທດນັ້ນ ແມ່ນບໍ່ມີຜົນໃຊ້ໄດ້ຢູ່ ສປປ ລາວ ເວັ້ນເສັຍແຕ່ກົດໝາຍຫາກໄດ້ກຳນົດໄວ້ຢ່າງອື່ນ.

### ມາດຕາ 22. ການກຳນົດມູນຄ່າ ແລະ ລັກສະນະຂອງອະສັງຫາລິມະຊັບ

ສັນຍາຄ້ຳປະກັນດ້ວຍອະສັງຫາລິມະຊັບ ຕ້ອງໄດ້ກຳນົດມູນຄ່າ ແລະ ລັກສະນະຂອງອະສັງຫາລິມະຊັບຢ່າງລະອຽດເຊັ່ນ: ປະເພດ, ຊະນິດ, ຂະໜາດ, ຄຸນນະພາບ, ຈຳນວນ ແລະ ສະ ຖານທີ່ຕັ້ງຂອງອະສັງຫາລິມະຊັບ ຊຶ່ງນຳມາຄ້ຳປະກັນນັ້ນ.

### ມາດຕາ 23. ການສ້ອມແປງ, ປັບປຸງ ຫລື ເພີ່ມເຕີມ

ຖ້າວ່າຊັບທີ່ນຳມາຄ້ຳປະກັນນັ້ນ ຫາກມີການສ້ອມແປງ, ປັບປຸງ ຫລື ເພີ່ມເຕີມກໍໃຫ້ນັບເຂົ້າໃນມູນຄ່າຂອງຊັບດັ່ງກ່າວ.

### ມາດຕາ 24. ການນຳໃຊ້ອະສັງຫາລິມະຊັບ

ອະສັງຫາລິມະຊັບຊຶ່ງນຳໄປຄ້ຳປະກັນນັ້ນ ລູກໜີ້ຕ້ອງນຳໃຊ້ ແລະ ປົກປັກຮັກສາໃຫ້ຢູ່ໃນສະພາບປົກກະຕິ, ລູກໜີ້ຈະເຮັດໃຫ້ອະສັງຫາລິມະຊັບທີ່ນຳມາຄ້ຳປະກັນນັ້ນຫລຸດມູນຄ່າລົງບໍ່ໄດ້ ຖ້າຫາກບໍ່ໄດ້ຮັບອະນຸຍາດຈາກເຈົ້າໜີ້.

### ມາດຕາ 25. ສິດຂອງເຈົ້າໜີ້

ເຈົ້າໜີ້ທີ່ມີການຄ້ຳປະກັນດ້ວຍອະສັງຫາລິມະຊັບ ມີບຸລິມະສິດໄດ້ຮັບການໃຊ້ແທນໜີ້ສິນກ່ອນເຈົ້າໜີ້ຜູ້ອື່ນ ທີ່ບໍ່ມີການຄ້ຳປະກັນ ຫລື ເຈົ້າໜີ້ທີ່ໄດ້ຮັບການຄ້ຳປະກັນນຳຫລັງຕົນກ່ຽວກັບຊັບນັ້ນ ເວັ້ນເສັຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງກົດໝາຍສະບັບນີ້.

ລູກໜີ້ບໍ່ມີສິດຂາຍ, ມອບ ຫລື ແລກປ່ຽນຊັບທີ່ນຳໄປຄ້ຳປະກັນນັ້ນ. ຖ້າຫາກລະເມີດ ເຈົ້າໜີ້ມີສິດທວງທາວ, ຕິດຕາມເອົາຊັບນັ້ນຄືນ. ລູກໜີ້ເປັນຜູ້ຮັບພາລະການໃຊ້ຈ່າຍໃນການທວງທາວ, ຕິດຕາມເອົາຊັບນັ້ນຄືນ ລວມທັງຄ່າເສັຍຫາຍທີ່ເກີດຂຶ້ນຈາກການລະເມີດນັ້ນ.

ເຈົ້າໜີ້ມີສິດປະມູນຂາຍຊັບທີ່ນຳມາຄ້ຳປະກັນນັ້ນ ເພື່ອໃຊ້ແທນໜີ້ສິນ ພ້ອມທັງດອກເບັ້ຍ ໃຫ້ຕົນ ໃນກໍລະນີທີ່ລູກໜີ້ຫາກບໍ່ໃຊ້ແທນໜີ້ສິນຕາມກຳນົດເວລາ.

## ໝວດທີ IV ການຄ້ຳປະກັນດ້ວຍບຸກຄົນ ຫລື ນິຕິບຸກຄົນອື່ນ

### ມາດຕາ 26. ການຄ້ຳປະກັນດ້ວຍບຸກຄົນ ຫລື ນິຕິບຸກຄົນອື່ນ

ການຄ້ຳປະກັນດ້ວຍບຸກຄົນ ຫລື ນິຕິບຸກຄົນອື່ນ ແມ່ນການທີ່ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງ ໄດ້ຕົກລົງໃຊ້ແທນໜີ້ສິນ ຫລື ປະຕິບັດພັນທະອື່ນຕາງລູກໜີ້ ໂດຍມີສັນຍາຄ້ຳປະກັນຢ່າງເປັນ ລາຍລັກອັກສອນ ໃນກໍລະນີທີ່ລູກໜີ້ຫາກບໍ່ໃຊ້ແທນໜີ້ສິນ ຫລື ບໍ່ປະຕິບັດພັນທະອື່ນດ້ວຍຕົນ ເອງ.

ຜູ້ຄ້ຳປະກັນສາມາດເອົາອະສັງຫາລິມະຊັບ ຫລື ສັງຫາລິມະຊັບ ຊຶ່ງເປັນກຳມະສິດຂອງຕົນນຳມາຄ້ຳປະກັນຕື່ມອີກກໍໄດ້.

### ມາດຕາ 27. ຂອບເຂດຄວາມຮັບຜິດຊອບຂອງຜູ້ຄ້ຳປະກັນ

ຜູ້ຄ້ຳປະກັນອາດຈະຄ້ຳປະກັນການໃຊ້ແທນໜີ້ສິນທັງໝົດ ຫລື ສ່ວນໃດສ່ວນໜຶ່ງກໍໄດ້. ຜູ້ຄ້ຳປະກັນຕ້ອງໃຊ້ແທນໜີ້ສິນ ຕາມທີ່ໄດ້ຕົກລົງໄວ້ໃນສັນຍາຄ້ຳປະກັນ. ໃນການໃຊ້ແທນໜີ້ສິນນັ້ນ ຜູ້ຄ້ຳປະກັນມີພັນທະໃຊ້ແທນພຽງແຕ່ຕົ້ນທຶນເທົ່ານັ້ນ ເວັ້ນເສັຍແຕ່ສັນຍາຫາກໄດ້ກຳນົດໄວ້ຢ່າງອື່ນ.

ໃນກໍລະນີລູກໜີ້ ຫາກມີຄວາມສາມາດໃຊ້ແທນໜີ້ສິນໄດ້ສ່ວນໃດສ່ວນໜຶ່ງເທົ່ານັ້ນ ສ່ວນທີ່ຍັງເຫລືອນັ້ນ ແມ່ນຜູ້ຄ້ຳປະກັນຕ້ອງໃຊ້ແທນ ແຕ່ບໍ່ໃຫ້ເກີນຈຳນວນໜີ້ສິນທີ່ຜູ້ກ່ຽວຕົກລົງຄ້ຳປະກັນ.

ເມື່ອເຖິງກຳນົດເວລາທີ່ໄດ້ບົ່ງໄວ້ໃນສັນຍາແລ້ວ ເຈົ້າໜີ້ຕ້ອງທວງທາວເອົານຳລູກໜີ້ເສັຍ ກ່ອນ, ຖ້າວ່າລູກໜີ້ ຫາກບໍ່ໃຊ້ແທນໜີ້ສິນແລ້ວ ເຈົ້າໜີ້ຈຶ່ງມີສິດທວງເອົານຳຜູ້ຄ້ຳປະກັນໄດ້.

ຜູ້ຄ້ຳປະກັນ ມີສິດປົກປ້ອງລູກໜີ້ທີ່ຕົນຄ້ຳປະກັນນັ້ນ. ຜູ້ຄ້ຳປະກັນ ແລະ ລູກໜີ້ ມີພັນທະ ແຈ້ງໃຫ້ກັນຊາບ ກ່ຽວກັບການໃຊ້ແທນໜີ້ສິນທີ່ຕົນໄດ້ປະຕິບັດໄປແລ້ວ. ຜູ້ຄ້ຳປະກັນທີ່ໄດ້ໃຊ້ໜີ້ສິນທັງໝົດ ຫລື ສ່ວນໃດສ່ວນໜຶ່ງ ແທນລູກໜີ້ແລ້ວນັ້ນ ກໍກາຍມາເປັນເຈົ້າໜີ້ຂອງລູກໜີ້ຜູ້ນັ້ນ ແລະ ມີສິດທວງເອົາຕົ້ນທຶນທີ່ຕົນໄດ້ຈ່າຍໄປແລ້ວ ລວມທັງດອກເບ້ຍ ແລະ ຄ່າໃຊ້ຈ່າຍຕ່າງໆ ຖ້າຫາກໄດ້ຕົກລົງກັນໄວ້ໃນສັນຍາ.

## ມາດຕາ 28. ຜູ້ຄ້ຳປະກັນຮ່ວມ

ໜີ້ສິນອາດຈະຖືກຄ້ຳປະກັນດ້ວຍສອງຄົນ ຫລື ຫລາຍກວ່ານັ້ນຊຶ່ງເອີ້ນວ່າ ຜູ້ຄ້ຳປະກັນຮ່ວມໃນສັນຍາດຽວ ຫລື ຫລາຍສັນຍາກໍໄດ້.

ຜູ້ຄ້ຳປະກັນຮ່ວມແຕ່ລະຄົນຈະຄ້ຳປະກັນໜີ້ສິນຮ້ອຍສ່ວນຮ້ອຍ ຫລື ໜ້ອຍກວ່ານັ້ນກໍໄດ້ ຕາມທີ່ໄດ້ຕົກລົງກັນ. ໃນກໍລະນີການຄ້ຳປະກັນແຕ່ລະຄົນຮ້ອຍສ່ວນຮ້ອຍນັ້ນ ເຈົ້າໜີ້ມີສິດທວງເອົາໜີ້ສິນທັງໝົດນຳຜູ້ຄ້ຳປະກັນຮ່ວມຜູ້ໃດຜູ້ໜຶ່ງກໍໄດ້.

ໃນກໍລະນີການຄ້ຳປະກັນສ່ວນໃດສ່ວນໜຶ່ງນັ້ນ ເຈົ້າໜີ້ມີສິດທວງເອົາໜີ້ສິນນຳຜູ້ຄ້ຳປະກັນຮ່ວມຕາມສ່ວນທີ່ຜູ້ກ່ຽວຮັບຜິດຊອບ.

ໃນເມື່ອລູກໜີ້ຫາກໄດ້ໃຊ້ແທນໜີ້ສິນສ່ວນໃດສ່ວນໜຶ່ງແລ້ວ ເຈົ້າໜີ້ມີສິດທວງເອົາໜີ້ສິນທີ່ຍັງເຫລືອນັ້ນ ນຳຜູ້ຄ້ຳປະກັນຮ່ວມຜູ້ໃດຜູ້ໜຶ່ງກໍໄດ້ ຖ້າຫາກແມ່ນການຄ້ຳປະກັນໜີ້ສິນຮ້ອຍສ່ວນຮ້ອຍ. ຖ້າແມ່ນການຄ້ຳປະກັນສ່ວນໃດສ່ວນໜຶ່ງ ເຈົ້າໜີ້ມີສິດທວງເອົາໜີ້ສິນ ຕາມພູດຂອງແຕ່ລະຄົນຮັບຜິດຊອບ.

## ມາດຕາ 29. ຜູ້ຄ້ຳປະກັນເສັຍຊີວິດ ຫລື ເສັຍຈິດ

ເມື່ອຜູ້ຄ້ຳປະກັນຫາກເສັຍຊີວິດ ຫລື ເສັຍຈິດ ການຄ້ຳປະກັນນັ້ນ ແມ່ນສືບຕໍ່ໂດຍຜູ້ສືບທອດມູນມໍຣະດົກ ຫລື ຜູ້ປົກຄອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍມູນມໍຣະດົກ ແລະ ພື້ນຖານການສືບທອດມູນມໍຣະດົກ ແລະ ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ.

## ມາດຕາ 30. ການພົ້ນຈາກການຄ້ຳປະກັນ

ຜູ້ຄ້ຳປະກັນຈະພົ້ນຈາກການຄ້ຳປະກັນໃນກໍລະນີໃດໜຶ່ງດັ່ງຕໍ່ໄປນີ້:

- ລູກໜີ້ໄດ້ໃຊ້ແທນໜີ້ສິນໝົດແລ້ວ;
- ຜູ້ຄ້ຳປະກັນໄດ້ປະຕິບັດພັນທະຂອງຕົນຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
- ມີການປ່ຽນແປງ, ເພີ່ມເຕີມເນື້ອໃນສັນຍາລະຫວ່າງລູກໜີ້ ແລະ ເຈົ້າໜີ້ ໂດຍຜູ້ຄ້ຳປະກັນບໍ່ເຫັນດີນຳ.

## ໝວດທີ V ລະບຽບການລວມຂອງການຄ້ຳປະກັນ

### ມາດຕາ 31. ການຈົດທະບຽນການຄ້ຳປະກັນ

ສັນຍາຄ້ຳປະກັນ ຕ້ອງນຳໄປຈົດທະບຽນຢູ່ຫ້ອງການຈົດທະບຽນຂອງຂະແໜງການເງິນ. ສຳລັບສັນຍາຄ້ຳປະກັນດ້ວຍອະສັງຫາລິມະຊັບນັ້ນ ຕ້ອງນຳໄປຈົດທະບຽນຢູ່ຫ້ອງການຄຸ້ມຄອງທີ່ດິນ ບ່ອນຊັບຕັ້ງຢູ່.

ສັນຍາຄ້ຳປະກັນ ຈະໃຊ້ໄດ້ຢ່າງເປັນທາງການ ນັບແຕ່ວັນໄດ້ຈົດທະບຽນເປັນຕົ້ນໄປ.

ເຈົ້າໜີ້ ມີບຸລິມະສິດໃນການໄດ້ຮັບການໃຊ້ແທນໜີ້ສິນ ນັບແຕ່ວັນທີ່ໄດ້ຈົດທະບຽນສັນຍາ ຄ້ຳປະກັນເປັນຕົ້ນໄປ.

ສັນຍາຄ້ຳປະກັນທີ່ບໍ່ໄດ້ຈົດທະບຽນມີຜົນໃຊ້ໄດ້ລະຫວ່າງຄູ່ສັນຍາ ແຕ່ຫາກບໍ່ມີບຸລິມະສິດ ເຊັ່ນດຽວກັບສັນຍາຄ້ຳປະກັນທີ່ໄດ້ຈົດທະບຽນ.

ການຈົດທະບຽນສັນຍາຄ້ຳປະກັນ ຢູ່ຫ້ອງການຈົດທະບຽນຂອງຂະແໜງການເງິນ ຫລື ຢູ່ຫ້ອງການຄຸ້ມຄອງທີ່ດິນ ຕ້ອງດຳເນີນຢ່າງເປີດເຜີຍ ແລະ ໃຫ້ສາທາລະນະຊົນສາມາດເບິ່ງຂໍ້ມູນໄດ້ ໂດຍບໍ່ຈຳເປັນຕ້ອງມີການຮ້ອງຂໍ.

### ມາດຕາ 32. ການສະລະບຸລິມະສິດ ແລະ ການໂອນການຄ້ຳປະກັນ

ເຈົ້າໜີ້ທີ່ມີບຸລິມະສິດ ສາມາດສະລະບຸລິມະສິດຂອງຕົນໃຫ້ແກ່ເຈົ້າໜີ້ຜູ້ອື່ນ ທີ່ມີການຄ້ຳປະ ກັນ ແຕ່ບໍ່ໃຫ້ເກີນມູນຄ່າໜີ້ສິນຂອງຕົນ.

ເຈົ້າໜີ້ທີ່ມີການຄ້ຳປະກັນ ມີສິດໂອນການຄ້ຳປະກັນຂອງຕົນໃຫ້ແກ່ເຈົ້າໜີ້ຜູ້ອື່ນ ທີ່ບໍ່ມີ ການຄ້ຳປະກັນຕໍ່ລູກໜີ້ຜູ້ດຽວກັນ ແຕ່ບໍ່ໃຫ້ເກີນມູນຄ່າໜີ້ຂອງລູກໜີ້.

ເຈົ້າໜີ້ ທີ່ມີການຄ້ຳປະກັນສາມາດໂອນໜີ້ ລວມທັງຜົນປະໂຫຍດໃນໜີ້ຂອງຕົນໃຫ້ບຸກຄົນອື່ນ. ໃນກໍລະນີນີ້ການຄ້ຳປະກັນ ແລະ ບຸລິມະສິດທີ່ຕິດພັນກັບໜີ້ນັ້ນ ກໍຈະຖືກໂອນໄປພ້ອມ ແຕ່ບໍ່ໃຫ້ເກີນມູນຄ່າໜີ້ຂອງຕົນ.

### ມາດຕາ 33. ສິດ ແລະ ພັນທະຂອງຜູ້ປົກຄອງ

ຜູ້ປົກຄອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຜູ້ປົກຄອງຄົນເສຍຈິດ ຫລື ຜູ້ຄຸ້ມຄອງຊັບສົມບັດຂອງຜູ້ຫາຍສາບສູນມີພັນທະປົກປັກຮັກສາຊັບສົມບັດຂອງພວກເຂົາ.

ຜູ້ປົກຄອງ ຫລື ຜູ້ຄຸ້ມຄອງດັ່ງກ່າວມີສິດນຳເອົາຊັບສົມບັດຂອງເດັກ ຫລື ຜູ້ເສຍຈິດໄປຄ້ຳປະກັນໜີ້ ເພື່ອຮັບປະກັນການໃຊ້ຈ່າຍໃນການຄຸ້ມຄອງດູແລ ແລະ ຮັກສາຜົນປະໂຫຍດຂອງພວກເຂົາຕາມຄຳເຫັນດີຂອງສານ.

ຜູ້ປົກຄອງ ຫລື ຜູ້ຄຸ້ມຄອງຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນຕໍ່ຊັບສົມບັດຂອງຜູ້ທີ່ຢູ່ໃຕ້ການຄຸ້ມຄອງດູແລຂອງຕົນ ຖ້າວ່າຜົນເສຍຫາຍນັ້ນ ຫາກເກີດຂຶ້ນຍ້ອນຄວາມຜິດພາດຂອງຕົນ.

## ມາດຕາ 34. ສິດໃນການຂາຍຊັບທີ່ນຳມາຄ້ຳປະກັນ

ໃນກໍລະນີທີ່ລູກໜີ້ ຫລື ຜູ້ຄ້ຳປະກັນ ຫາກບໍ່ໃຊ້ແທນໜີ້ສິນຕາມກຳນົດເວລາໄດ້ ຜູ້ກ່ຽວ ຈະໝົດກຳມະສິດຕໍ່ຊັບທີ່ເອົາມາຊວດຈຳ ຫລື ຄ້ຳປະກັນ ແລະ ເຈົ້າໜີ້ ກໍມີສິດເປັນເຈົ້າຂອງຊັບທີ່ນຳມາຄ້ຳປະກັນຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ.

ເຈົ້າໜີ້ ມີສິດປະມູນຂາຍຊັບທີ່ນຳມາຊວດຈຳ ຫລື ຄ້ຳປະກັນນັ້ນ ເພື່ອໃຊ້ແທນໜີ້ສິນ. ໃນກໍລະນີທີ່ວັດຖຸສິ່ງຂອງທີ່ນຳມາຊວດຈຳ ຫລື ຄ້ຳປະກັນນັ້ນ ຫາກມີລາຄາສູງກວ່າໜີ້ສິນແລ້ວ ເຈົ້າໜີ້ສາມາດເສັ້ງເອົາ, ຂາຍຊັບທີ່ນຳມາຊວດຈຳ ຫລື ຄ້ຳປະ ກັນນັ້ນຕາມທີ່ໄດ້ຕົກລົງກັນ ຫລື ປະມູນຂາຍ. ພາຍຫລັງທີ່ໄດ້ຫັກເອົາຕົ້ນທຶນ ແລະ ດອກເບ້ຍແລ້ວ ສ່ວນທີ່ເຫລືອຕ້ອງສົ່ງຄືນໃຫ້ລູກໜີ້. ຖ້າວ່າຈຳນວນເງິນທີ່ໄດ້ຈາກການຂາຍຊັບທີ່ນຳມາຊວດຈຳ ຫລື ຄ້ຳປະກັນນັ້ນ ຫາກບໍ່ພຽງພໍກັບໜີ້ສິນ ແມ່ນໃຫ້ລູກໜີ້ ຫລື ຜູ້ຄ້ຳປະກັນຕື່ມໃສ່ຈົນໃຫ້ຄົບຖ້ວນ.

ຊັບທີ່ນຳມາຄ້ຳປະກັນຕາມສັນຍາທີ່ຖືກຍຶດ ຫລື ອາຍັດຕາມຄຳສັ່ງຂອງສານ ຈະນຳມາຂາຍໄດ້ດ້ວຍການປະມູນຂາຍ ຕາມການຮ້ອງຂໍຂອງເຈົ້າໜີ້ ຫລື ຂາຍຕາມທີ່ໄດ້ກຳນົດໄວ້ໃນສັນຍາຄ້ຳປະກັນ.

ເມື່ອເຈົ້າໜີ້ ຫລື ຜູ້ຊື້ ໄດ້ເຂົ້າຄຸ້ມຄອງ ຫລື ຊື້ຊັບ ທີ່ນຳມາຊວດຈຳ ຫລື ຄ້ຳປະກັນນັ້ນແລ້ວ ເຈົ້າຂອງຊັບຕ້ອງໂອນກຳມະສິດຕໍ່ຊັບດັ່ງກ່າວ ໃຫ້ແກ່ເຈົ້າໜີ້ ຫລື ຜູ້ຊື້. ເຈົ້າໜ້າທີ່ຂອງລັດທີ່ກ່ຽວ ຂ້ອງ ກໍຕ້ອງຢັ້ງຢືນການໂອນສິດດັ່ງກ່າວໃຫ້ແກ່ເຈົ້າໜີ້ ຫລື ຜູ້ຊື້.

## ມາດຕາ 35. ການປ່ຽນແປງ ຫລື ການຍົກເລີກສັນຍາຄ້ຳປະກັນ

ສັນຍາຄ້ຳປະກັນຈະເພີ່ມເຕີມ, ປ່ຽນແປງ ຫລື ຍົກເລີກກໍໄດ້ ຖ້າວ່າຄູ່ສັນຍາທັງໝົດຫາກ ເຫັນດີເຫັນພ້ອມນຳກັນ. ທຸກເທື່ອທີ່ມີການເພີ່ມເຕີມ ຫລື ປ່ຽນແປງສັນຍາຄ້ຳປະກັນນັ້ນ ຕ້ອງໄດ້ຈົດທະບຽນຢ່າງຖືກຕ້ອງຕື່ມອີກ.

## ມາດຕາ 36. ການຄ້ຳປະກັນທີ່ເປັນໂມຄະ

ການຄ້ຳປະກັນຈະເປັນໂມຄະ ໃນກໍລະນີໃດໜຶ່ງດັ່ງນີ້:

1. ການຄ້ຳປະກັນທີ່ເຮັດຂຶ້ນໂດຍ ບໍ່ຖືກຕ້ອງຕາມກົດໝາຍ;
2. ຊັບທີ່ເອົາໄປຄ້ຳປະກັນນັ້ນ ບໍ່ແມ່ນກຳມະສິດຂອງຜູ້ຄ້ຳປະກັນທັງບໍ່ໄດ້ຮັບການມອບສິດ;
3. ການຄ້ຳປະກັນທີ່ເຮັດຂຶ້ນດ້ວຍການຂົ່ມຂູ່ ຫລື ຕົວະຍົວະຫລອກລວງ.

## ມາດຕາ 37. ການສິ້ນສຸດການຄ້ຳປະກັນ

ການຄ້ຳປະກັນຈະສິ້ນສຸດລົງໃນກໍລະນີໃດໜຶ່ງດັ່ງຕໍ່ໄປນີ້:

1. ໜີ້ສິນໄດ້ໃຊ້ແທນຄົບຕາມສັນຍາ;

2. ການທວງໜີ້ໄດ້ໝົດອາຍຸຄວາມແລ້ວ;
3. ເຈົ້າໜີ້ສະລະສິດ ກ່ຽວກັບການຄ້ຳປະກັນ.

### ມາດຕາ 38. ການລຶບລ້າງການຈົດທະບຽນສັນຍາຄ້ຳປະກັນ

ການຈົດທະບຽນສັນຍາຄ້ຳປະກັນ ຈະຖືກລຶບລ້າງໃນກໍລະນີໃດໜຶ່ງດັ່ງນີ້:

1. ເຈົ້າໜີ້ສະເໜີໃຫ້ລຶບລ້າງການຈົດທະບຽນ;
2. ເຈົ້າຂອງຊັບສະເໜີໃຫ້ລຶບລ້າງການຈົດທະບຽນການຄ້ຳປະກັນ ຖ້າວ່າການຄ້ຳປະກັນ ນັ້ນຫາກບໍ່ຖືກຕ້ອງ;
3. ສານໄດ້ຕັດສິນໃຫ້ລຶບລ້າງການຄ້ຳປະກັນ.

## ໝວດທີ VI ບົດບັນຍັດສຸດທ້າຍ

### ມາດຕາ 39. ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ອອກດຳລັດເພື່ອຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 40. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ ສາມສິບວັນ ນັບແຕ່ມື້ທີ່ປະທານປະເທດແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຄ້ຳປະກັນການປະຕິບັດສັນຍາ ສະບັບເລກທີ 07/94, ລົງວັນທີ 14 ຕຸລາ 1994.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ